## 7. PHP Conditional Statements (ຄຳສັ່ງເງື່ອນໄຂ)

- **if statement** - ຈະທຳການປະມວນຜົນຂອງລະຫັດໂປຼແກຼມທີ່ຂື້ນກັບຄຳສັ່ງ if ເມື່ອເງື່ອນໄຂຫຼັງ if ເປັນຈິງເທົ່ານັ້ນ.
- **if...else statement** - ຈະທຳການປະມວນຜົນຂອງລະຫັດໂປຼແກຼມທີ່ຂື້ນກັບຄຳສັ່ງ if ເມື່ອເງື່ອນໄຂຫຼັງ if ເປັນຈິງ ແລະ ຈະເຮັດຕາມຄຳສັ່ງທີ່ຂື້ນກັບ else ເມື່ອເງື່ອນໄຂຫຼັງ if ບໍ່ເປັນຈິງ.
- **if...elseif....else statement** - ໃຊ້ໃນກໍລະນີທີ່ມີຫຼາຍທາງເລືອກ ຈະທຳການກວດສອບເງື່ອນໄຂຫຼັງ if ຫຼື elseif ຖ້າຖືກເງື່ອນໄຂໃດໃຫ້ເຮັດລະຫັດໂປຼແກຼມທີ່ຂື້ນກັບເງື່ອນໄຂນັ້ນ ແຕ່ຖ້າຜົນການກວດສອບທຸກເງື່ອນໄຂບໍ່ເປັນຈິງ ແລ້ວຈະໄປເຮັດລະຫັດໂປຼແກຼມທີ່ຂື້ນກັບຄຳສັງ else.
- **switch statement** - ຈະທຳການກວດສອບຄ່າຂອງຕົວປ່ຽນຫຼັງ switch ກັບຄ່າຄົງຄ່າທີ່ກຳນົດໄວ້ຫຼັງ case ຖ້າຖືກ case ໃດ ໃຫ້ເຮັດລະຫັດໂປຼແກຼມທີ່ຂື້ນກັບ case ນັ້ນ ແລ້ວຈາກ case ດ້ວຍຄຳສັ່ງ break, ແຕ່ຖ້າຜົນການກວດສອບບໍ່ກົງກັບ case ໃດ ຈະໄປເຮັດຕາມຄຳສັ່ງ default.

### 7.1 ຮູບແບບຂອງຄຳສັ່ງ if

```
if (ເງື່ອນໄຂທີ່ໃຊ້ໃນການປຽບທຽບ) {

  ລະຫັດໂປຼແກຼມຈະທຳການປະມວນຜົນເມື່ອເງື່ອນໄຂເປັນຈິງ;

}
```

```
<?php
    $score = 100;
    if($score>70){
        echo " ເຈົ້າເປັນນັກຮຽນທີ່ຮຽນດີ";
    }
```

## 7.2 ຮູບແບບຂອງຄຳສັ່ງ if…else

```
if (ເງື່ອນໄຂທີ່ໃຊ້ໃນການປຽບທຽບ) {
  ລະຫັດໂປຼແກຼມຈະທຳການປະມວນຜົນເມື່ອເງື່ອນໄຂເປັນຈິງ;
}
else{
  ລະຫັດໂປຼແກຼມຈະທຳການປະມວນຜົນເມື່ອເງື່ອນໄຂເປັນບໍ່ຈິງ;
}
```

```
<html>
    <head><title>ຄຳສັ່ງ if...else</title>
        <style>
            body{
                font-family: Phetsarath OT;
            }
        </style>
    </head>
    <body>
        <h1>ສະແດງຜົນການສອບເສັງ<br></h1>
        <?php
        $score = 100;
        if($score>=70){
            echo " ເຈົ້າຜ່ານການສອບເສັງ<br>";
            echo "ຂໍສະແດງຄວາມຍິນດີ!";
        }
        else {
            echo "ເຈົ້າບໍ່ຜ່ານການສອບເສັງ<br>";
```

## 7.3 ຮູບແບບຂອງຄຳສັ່ງ if…elseif….else

```
if (ເງື່ອນໄຂທີ່ໃຊ້ໃນການປຽບທຽບ) {
  ລະຫັດໂປຼແກຼມຈະທຳການປະມວນຜົນເມື່ອເງື່ອນໄຂເປັນຈິງ;
}
else if (ເງື່ອນໄຂທີ່ໃຊ້ໃນການປຽບທຽບ) {
  ລະຫັດໂປຼແກຼມຈະທຳການປະມວນຜົນເມື່ອເງື່ອນໄຂເປັນຈິງ;
}
.
.
else {
  ລະຫັດໂປຼແກຼມຈະທຳການປະມວນຜົນເມື່ອເງື່ອນໄຂເປັນບໍ່ຈິງ;
}
```

ຕົວຢ່າງ: ຮ້ານຄ້າແຫ່ງນຶ່ງຕ້ອງການຂຽນໂປຼແກຼມເພື່ອຫາສ່ວນຫຼຸດໃຫ້ກັບລູກຄ້າຈາກລາຄາສິນຄ້າທັງໝົດ ໂດຍມີເງື່ອນໄຂດັ່ງນີ້:

- ຖ້າລາຄ່າສິນຄ້າທັງໝົດຕັ້ງແຕ່ 1 – 100000 ກີບ ຫຼຸດ 2% ຂອງລາຄາສິນຄ້າທັງໝົດ
- ຖ້າລາຄ່າສິນຄ້າທັງໝົດຕັ້ງແຕ່ 100001 – 200000 ກີບ ຫຼຸດ 3% ຂອງລາຄາສິນຄ້າທັງໝົດ
- ຖ້າລາຄ່າສິນຄ້າທັງໝົດຕັ້ງແຕ່ 200001 – 500000 ກີບ ຫຼຸດ 5% ຂອງລາຄາສິນຄ້າທັງໝົດ
- ຖ້າສູງກວ່າ 500000 ກີບ ຫຼຸດ 7%

ສະແດງຜົນ

```
ລາຄາສິນຄ່າທັງໝົດ: xxxxxxxx ກີບ
ສ່ວນຫຼຸດ: xxx% = xxxxxxxx ກີບ
ລາຄາທີ່ຕ້ອງຈ່າຍ: xxxxxxxx ກີບ
ຂອບໃຈ ທີ່ໃຊ້ບໍລິການ
```

```
<?php
//ຮັບຄ່າຈາກຟອມ
if (isset($_POST['cal'])) {
   //ກວດສອບຟອມ
   if (empty($_POST['customer'])) {
```

```
        $error_cus = "ກະລຸນາປ້ອນຊື່ຂອງລູກຄ້າ";
    } else {
        $customer = $_POST['customer'];
    }

    if (empty($_POST['price'])) {
        $error_price = "ກະລຸນາປ້ອນລາຄາສິນຄ້າ";
    } else {
        $price = $_POST['price'];
    }

    //ຄິດໄລ່ຫາສ່ວນຫຼຸດ
    if ($price <= 100000) {
        $percent = 2;
    } elseif ($price <= 200000) {
        $percent = 3;
    } elseif ($price <= 500000) {
        $percent = 5;
    } else {
        $percent = 7;
    }
    //ຫາສ່ວນຫຼຸດ ແລະ ລາຄາຕ້ອງຈ່າຍ
    $discount = $price * $percent / 100;
    $pay = $price - $discount;
}
?>
<!DOCTYPE html>
<html>
    <head>
        <meta charset="UTF-8">
        <title></title>
```

```
    </head>
    <body>
        <form action="" method="post">
            ຊື່ລູກຄ້າ <input type="text" name="customer" placeholder="ກະລຸນາປ້ອນຊື່ລູກຄ້າ" value="<?=
$customer ?>"> <?= $error_cus ?><br><br>
            ລາຄາສິນຄ້າ <input type="text" name="price" placeholder="ກະລຸນາປ້ອນລາຄາສິນຄ້າ"
value="<?= $price ?>"> <?= $error_price ?><br><br>
            <input type="submit" name="cal" value="ສິ່ງຄ່າ">
            <button onclick="windows_location_reload(true)">ໂຫຼດໃໝ່</button>
        </form>
        <?php
        //ກວດສອບວ່າກົດປຸ່ມ cal ແລະ ຕ້ອງປ້ອນຄົບທຸກຊອງ
        if (isset($_POST['cal']) && empty($error_cus) && empty($error_price)) {
            echo "<hr><br>ຊື່ລູກຄ້າ $customer";
            echo "<br>ລາຄາທັງໝົດ: ", number_format($price, 2), " ກີບ";
            echo "<br>ສ່ວນຫຼຸດ $percent %: ", number_format($discount, 2), " ກີບ";
            echo "<br>ຕ້ອງຊຳລະ: ", number_format($pay, 2), " ກີບ";
            echo '<br><b>ຂອບໃຈ</b>';
        }
        ?>
    </body>
</html>
```

## 7.3 ຮູບແບບຂອງຄຳສັ່ງ switch …. case

```
switch (n) {
  case label1:
    ປະມວນຜົນຖ້າວ່າ n=label1;
    break;
  case label2:
    ປະມວນຜົນຖ້າວ່າ n=label2;
    break;
  case label3:
    ປະມວນຜົນຖ້າວ່າ n=label3;
    break;
  ...
  default:
    ປະມວນຜົນເມື່ອຄ່າຂອງ n ແຕກຕ່າງຈາກທຸກ labels;
}
```

```php
<?php
$favcolor= "A";

switch ($favcolor) {
  case "B":
    echo "Your favorite color is red!";
    break;
  case "C":
    echo "Your favorite color is blue!";
    break;
  case "A":
    echo "Your favorite color is green!";
    break;
  default:
    echo "Your favorite color is neither red, blue, or green!";
}
?>
```

ພິດເສດ: ຖ້າບໍ່ໃສຄີເວີດ break ໂປຼແກຼມຈະທຳການປະມວນຈົນກວ່າຮອດ ຄີເວີດ break ຈິ່ງອອກຈາກ switch

```
<?php
$favcolor= "C";

switch ($favcolor) {
  case "B":
    echo "Your favorite color is red!";

  case "C":
    echo "Your favorite color is blue!";

  case "A":
    echo "Your favorite color is green!";
    break;
  default:
    echo "Your favorite color is neither red, blue, or green!";
}
?>
```